ໄດ້ ຖ້າຕ້ອງການເວລາຈຳເປັນປ້ອງກັນປະເທດ. ຂ້າພະເຈົ້າຂໍເວົ້າຕາມຄວາມຈິງອີກວ່າ ພົລເມືອງຂອງປະເທດນີ້ ມັກຄວາມສງົບ ແລະ ບໍ່ມີຄວາມຊຳນານໃນການໃຊ້ອາວຸດ. ເລື່ອງນີ້ອາດມາຈາກຄວາມແນ່ໃຈຂອງເຂົາເຈົ້າ ເພາະພູມປະເທດຂອງເຂົາເຈົ້າ ເຕັມໄປດ້ວຍພູຜາປ່າເລິກ ໂສກເຫວ ອ້ອມຮອບໄວ້ທຸກດ້ານ ເພື່ອຕ້ານທານສັດຕູອີກ ເຂົາມີຄວາມຊຳນານໃນການແຕ່ງຢາເບື່ອ ພໍແຕ່ຖິ້ມໃສ່ຕາມລຳນ້ຳພຽງເລັກນ້ອຍ ຢາພິດນັ້ນ ກໍສາມາດທຳລາຍສັດຕູໄດ້".

## ຮີດຄອງປະເພນີ ແລະ ວັທນະທັມລາວ

"ພົລເມືອງມີຂນົບທຳນຽມອັນດີ ເນື່ອງຈາກທັມມະຊາດປະກອບໃຫ້ມາແຕ່ເດີມ, ເຂົາເຈົ້າເປັນຄົນເວົ້ານິ່ມນວນ ສອນງ່າຍ ສລາດ ແລະ ປົກກະຕິແລ້ວມັກຄວາມສງົບ ແລະ ມັກພັກຜ່ອນ. ເຂົາເຈົ້າມັກພໍໃຈຕ້ອນຮັບຊາວຕ່າງປະເທດ ໂດຍບໍ່ມີຄວາມອາຣີຂີ້ຄຽດ ລະແວງສົງສັຍຫຍັງເລີຍ, ເຂົາເຈົ້າປະພຶດຕົວຕໍ່ຊາວຕ່າງປະເທດຢ່າງອ່ອນຫວານ ມີຄວາມຊື່ສັດບໍ່ມັກສໍ້ໂກງ. ກຽວກັບຊັບສົມບັດ ຫລືສິ່ງຂອງໃດກໍຕາມ ທີ່ໄດ້ຈາກຊາວຕ່າງປະເທດ ເຄື່ອງຂອງຜູ້ອື່ນເມື່ອເຂົາເກັບໄດ້ ແລະ ເມື່ອເຈົ້າຂອງເດີມມາທັກທວງຮ້ອງຂໍຄືນ ເຂົາກໍສົ່ງໃຫ້ໂດຍດີໂດຍບໍ່ຄິດເອົາຄ່າຮັກສາແຕ່ຢ່າງໃດ ພໍແຕ່ໄດ້ຮັບຄວາມຂອບໃຈທໍ່ນັ້ນກໍເປັນພໍ ເຂົາຖືວ່ານ້ຳໃຈອັນດີມີຄຸນຄ່າຫລາຍກວ່າສົມບັດອື່ນໆ".

## ການປົກຄອງ

"ພຣະເຈົ້າແຜ່ນດິນ ມີອຳນາດເດັດຂາດເໜືອກົດໝາຍ ເໜືອດິນດອນຕອນຫຍ້າທັງໝົດມີແຕ່ພຣະສົງອົງລະເຈົ້າທໍ່ນັ້ນ ທີ່ໄດ້ຮັບກຳມະສິດທີ່ດິນ (ພຣະຣາຊທານວິສຸງຄາມສີມາຕາມລະບຽບວິນັຍ) ແລະ ເຈົ້ານາຍອ້າຣາຊການ (ສັກດີນາ) ທີ່ໄດ້ຮັບທີ່ດິນແລ້ວ ກໍແບ່ງໃຫ້ຣາສດອນເຮັດຢູ່ເຮັດກິນ ພວກຣາສດອນທີ່ຢູ່ນັ້ນ ໄດ້ເອົາຜົນປໂຍດຈາກການເກັບກ່ຽວແບ່ງໃຫ້ເຈົ້ານາຍອ້າຣາຊການ ໃນລະຍະ 2-3 ປີຕົ້ນ ເຄິ່ງນຶ່ງຂອງຜົລປູກ (ໝາຍເຖິງເຂົ້າ) ໂດຍຄວາມລະມ່ອມລະໄມທີ່ສຸດ, ການຜິດຖຽງກັນ ແລະ ການຄຽດຊັງເຊິ່ງກັນ ແລະ ກັນ ຜາກົດວ່າບໍ່ມີເລີຍ. ຄຸນພໍ່ສາສນາຄຣິສຕຽນຫລາຍທ່ານ ໄດ້ມາຢູ່ນຳປວງຊົນລາວໄດ້ຫລາຍປີມາແລ້ວບໍ່ຜາກົດພວກນີ້ໄດ້ຮູ້ໄດ້ເຫັນ ໄດ້ຍິນພວກລາວຜິດກັນ ຫລືວ່າບໍ່ຖືກຕ້ອງປອງດອງກັນ ຂ້າພະເຈົ້າຂໍເວົ້າຕາມຄວາມຈິງວ່າ ນອກຈາກພວກຣາສດອນລາວມັກຢູ່ໃນຄວາມສງົບແລ້ວ ຍັງມີກົດໝາຍພື້ນເມືອງອີກ ຊຶ່ງເຄັ່ງຄັດທີ່ສຸດ ຖ້າຜິດກົດໝາຍແລ້ວ ກໍເອົາໄປໄໝເອົາເງິນໂລດ